

ໃນເຂດນີ້ມີຄົນລ້ຽງແກະທີ່ທົ່ງນາ. ມີທູດຂອງພຣະເຈົ້າມາປະກົດແກ່ພວກເຂົາ. ພວກເຂົາພາກັນຢ້ານຫລາຍ ແຕ່ທູດສະຫວັນໄດ້ກ່າວກັບເຂົາວ່າ, “ຢ່າສູ່ຢ້ານເລີຍ! ເຮົານໍາຂ່າວດີມາໃຫ້ພວກເຈົ້າຮູ້ ຄືຢູ່ໃນເມືອງພຣະຜູ້ໄຖ່ຂອງພວກເຈົ້າໄດ້ເກີດມາເປັນພຣະຜູ້ຊ່ວຍ. ພວກເຈົ້າຈະພົບເດັກເກີດໃໝ່ຕູ້ມຜ້າອ້ອມນອນຢູ່ໃນຮາງຫຍ້າ.

ໃນທັນໃດນັ້ນກໍມີກອງທັບແຫ່ງສະຫວັນໝູ່ໃຫຍ່ມາປະກົດຮ້ອງສັນລະເສີນພຣະເຈົ້າ.



ແລ້ວພວກລ້ຽງແກະພາກັນໄປຍັງເມືອງເບັດເລເຮັມ ແລ້ວພົບນາງມາລີ ກັບທ້າວໂຢເຊັບ ແລະເດັກເກີດໃໝ່ນອນຢູ່ໃນຮາງຫຍ້າ. ເມື່ອພວກລ້ຽງແກະພົບເດັກເກີດໃໝ່ແລ້ວ ເຂົາກໍເລົ່າໃຫ້ນາງມາລີ ກັບທ້າວໂຢເຊັບຟັງ ຕາມທີ່ທູດສະຫວັນໄດ້ບອກນັ້ນ. ທຸກຄົນໄດ້ຟັງ ແລະຕ່າງກໍປະຫລາດໃຈ.



ເມື່ອ ທ້າວໂຢເຊັບ ແລະ ນາງມາລີ ໄດ້ເຮັດວຽກສໍາເລັດແລ້ວພວກເຂົາຈຶ່ງໄດ້ກັບໄປຍັງແຂວງຄາລີເລ.

ພຣະເຢຊູກໍໄດ້ຈະເລີນເຕີບໂຕຂຶ້ນຢູ່ທີ່ນັ້ນ.



ຊື່ ____________________

ລະຫັດ ________



## ພຣະເຢຊູເຈົ້າເກີດ

ເຮົາຢາກຈະຮູ້ຈັກທ່ານຜູ້ໜຶ່ງທີ່ຈະມາຊ່ວຍເຮົາໃຫ້ພົ້ນຈາກອຳນາດຂອງຊາຕານບໍ? ມື້ນີ້ເຮົາຈະໄດ້ຮູ້ຈັກຊື່ຂອງທ່ານຜູ້ນັ້ນ ແລະຈະໄດ້ຮຽນຮູ້ກ່ຽວກັບຈຸດປະສົງທີ່ທ່ານໄດ້ສະເດັດເຂົ້າມາໃນໂລກ.



ໃນແຂວງຄາລີເລເມືອງນາຊາເລັດມີຍິງຄົນໜຶ່ງຊື່ວ່າ ນາງມາລີ. ລາວມີຄູ່ໝັ້ນຊື່ວ່າ ທ້າວໂຢເຊບ. ມື້ໜຶ່ງມີທູດສະຫວັນຂອງພຣະເຈົ້າປະກົດຕໍ່ ນາງມາລີ ແລະກ່າວວ່າ, "ມາລີເອີຍ! ເຈົ້າຈະຖືພາ ແລະເກີດລູກຊາຍ. ລູກຈະເອີ້ນວ່າເປັນບຸດຂອງພຣະເຈົ້າອົງສູງສຸດ."

ຝ່າຍ ນາງມາລີ ເວົ້າກັບທູດສະຫວັນວ່າ, "ຜູ້ຂ້າຍັງບໍ່ເຄີຍສົມສູ່ກັບຊາຍໃດຈັກເທື່ອ ເຫດການຈະເປັນດັ່ງທີ່ ທ່ານກ່າວມາໄດ້ຢ່າງໃດ?"

ທູດສະຫວັນຕອບນາງວ່າ, "ລິດເດດຂອງພຣະເຈົ້າອົງສູງສຸດຈະຄຸມເຈົ້າດ້ວຍເຫດນີ້ແຫຼະ ເດັກຜູ້ບໍລິສຸດຈະເປັນທີ່ເອີ້ນວ່າ, "ບຸດຂອງພຣະເຈົ້າ."



ແລ້ວ ນາງມາລີ ກໍໄດ້ຖືພາດ້ວຍລິດເດດແຫ່ງພຣະວິນຍານບໍລິສຸດ. ຝ່າຍທ້າວໂຢເຊັບຄູ່ໝັ້ນຂອງ ນາງມາລີ ຕັດສິນໃຈວ່າຈະຖອນໝັ້ນເສຍຢ່າງລັບໆ





ແຕ່ໃນຂະນະທີ່ຄິດເຖິງແຜນການນີ້ຢູ່ມີທູດຂອງພຣະເຈົ້າປະກົດໃນຄວາມຝັນ ແລະກ່າວວ່າ, "ໂຢເຊັບເອີຍ! ຢ່າສູ່ຢ້ານທີ່ຈະຮັບເອົານາງມາລີ ເປັນເມຍ. ການທີ່ ນາງມາລີ ຕັ້ງທ້ອງນັ້ນກໍໂດຍລິດເດດຂອງພຣະວິນຍານບໍລິສຸດ. ນາງຈະເກີດລູກຊາຍຜູ້ໜຶ່ງ ແລະເຈົ້າຈະໃສ່ຊື່ເດັກນີ້ວ່າ ເຢຊູ."

ທ້າວໂຢເຊັບ ຈຶ່ງປະຕິບັດຕາມທີ່ພຣະເຈົ້າໄດ້ສັ່ງ ແຕ່ ທ້າວໂຢເຊັບບໍ່ໄດສົມສູ່ກັບນາງ ຈົນກວ່າໄດ້ເກີດ ລູກຊາຍແລ້ວ.

ໃນເວລານັ້ນຈັກກະພັດໂລມໄດ້ອອກຄຳສັ່ງໃຫ້ປະຊາຊົນໄປຈົດທະບຽນຄອບຄົວ. ຝ່າຍ ທ້າວໂຢເຊັບ ກໍອອກເດີນທາງຈາກເມືອງນາຊາເຫລັດ ໄປຍັງເມືອງເບັດເລເຮັມ ທີ່ເປັນບ້ານເກີດເມືອງນອນຂອງທ້າວໂຢເຊັບ.



ສ່ວນ ນາງມາລີ ນັ້ນກຳລັງຖືພາ ແລະໃນຂະນະທີ່ພວກເຂົາຍັງຢູ່ທີ່ເມືອງເບັດເລເຮັມນັ້ນ ນາງມາລີ ເກີດລູກ. ນາງໄດ້ເອົາຜ້າອ້ອມຕູ້ມ ແລະປົງລູກໄວ້ໃນຮາງຫຍ້າ ເພາະວ່າບໍ່ມີຫ້ອງວ່າງສຳລັບເຂົາໃນໂຮງແຮມ. ທ້າວໂຢເຊັບ ໄດ້ເອີ້ນລູກຊາຍນັ້ນວ່າ ເຢຊູ.